ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 1232/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 08 ທັນວາ 2017

# ຂໍ້ຕົກລົງ

## ກ່ຽວກັບການເກັບຄ່າທຳນຽມຕາມຄວາມສ່ຽງສິນເຊື່ອຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1** ໃຫ້ທະນາຄານທຸລະກິດສາມາດເກັບຄ່າທຳນຽມຕາມຄວາມສ່ຽງສິນເຊື່ອ ນອກຈາກຄ່າທຳນຽມປົກກະຕິທີ່ໄດ້ປະກາດໃຊ້ໄປກ່ອນໜ້ານັ້ນ ກັບລູກຄ້າແຕ່ລະລາຍໃນອັດຕາທີ່ແຕກຕ່າງກັນແລ້ວແຕ່ການປະເມີນຂອງທະນາຄານທຸລະກິດ.

**ມາດຕາ 2** ໃຫ້ທະນາຄານທຸລະກິດກຳນົດອັດຕາຄ່າທຳນຽມໃນຂອບເຂດບໍ່ເກີນ 3% ຂອງວົງເງິນສິນເຊື່ອທີ່ອະນຸມັດ.

**ມາດຕາ 3** ສິນເຊື່ອບ້ອງທີ່ໄດ້ປະຕິບັດກ່ອນອອກຂໍ້ຕົກລົງສະບັບນີ້ໃຫ້ປະຕິບັດຕາມເງື່ອນໄຂເກົ່າຈົນກວ່າຈະຄົບກຳນົດ.

**ມາດຕາ 4** ໃຫ້ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ບັນດາສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ແລະ ບັນດາທະນາຄານທຸລະກິດ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 5** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ທຸກຂໍ້ກຳນົດ, ລະບຽບ ແລະ ຄຳສັ່ງຂອງທະນາຄານກາງແຫ່ງ ສປປ ລາວ ທີ່ໃຊ້ໃນເມື່ອກ່ອນ ຖ້າຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ

...ຣ ສົມພາວ ໄຟສິດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**